ກໍາລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www. laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກໍາລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ສັບບທີ ໔໔໗ປພຖຊ/ ໐໗໑໔໐໗**

# ບົດຄວາມ

## ຢາກໃຫ້ການສຶກສາດີ ຕ້ອງປ່ຽນຣັຖບານ

ທ່ານ ສົມກິດ ມັງໜໍ່ເມກ ຣັຖມົນຕຣີກະຊວງສຶກສາ ກ່າວຢູ່ໃນກອງປະຊຸມສະພາ ຄັ້ງທີ 5 ຊຸດທີ 6 ກໍຣະກະດາ 2008 ນີ້, ມີໃຈຍຄວາມວ່າ ບັນຫາປະກົດການຫຍໍ້ທໍ້ ຂອງນັກຮຽນ ເປັນບັນຫາ ທີ່ເຈົ້າໜ້າທີ່ ຂແນງການສຶກສາ ໃນແຕ່ລະໂຮງຮຽນ ຫລື ສະຖາບັນ ຕ້ອງຊ່ວຍກັນແກ້ໄຂ ໃຫ້ຣະບົບ ການສຶກສາ ຂອງລາວເຂົ້າຣະບຽບວິນັຍ ແລະມີຄຸນພາບດີ... ແຕ່ ທ່ານ ບໍ່ໄດ້ບອກເຖິງ ສາເຫດ ທີ່ແທ້ຈິງ ວ່າ ປະກົດການຫຍໍ້ທໍ້ ຂອງນັກຮຽນນັ້ນ ເກີດມາຈາກໃສແທ້?

ພັກຣັດ, ຊໍ້າພັດໂຍນຄວາມຜິດນີ້, ໃຫ້ເປັນພາຣະໜ້າທີ່ ຮັບຜິດຊອບຂອງເຈົ້າໜ້າທີ່ ຂແນງການສຶກສາ ເປັນຜູ້ແກ້ໄຂ ທັງໆທີ່ ປະກົດການບໍ່ດີຕ່າງໆນັ້ນ ບໍ່ໄດ້ເກີດມາຈາກ ຄວາມຮູ້ເທົ່າບໍ່ເຖິງການ ຂອງນັກຮຽນ ຫລືມາຈາກຄວາມຜິດພາດ ຂອງຄູ-ອາຈານ ຈັກໜ່ອຍເລີຍ!... ແຕ່ມັນເປັນຍ້ອນ ຣະບົບການບໍຣິຫານ ປະເທດຊາດ ຂອງພັກຣັດ ໄດ້ບີບຮັດໃຫ້ພວກເຂົາ ຕ້ອງໄດ້ທໍາໄປ ເພື່ອຄວາມຢູ່ລອດ ໃນສັງຄົມຊ້າທາດອັນນີ້.

ການປອມແປງໃບປະກາດ ສະນິຍະບັດ ຂອງນັກຮຽນ, ມັນບໍ່ໄດ້ແຕກຕ່າງຫຍັງ ກັບ ການເອົາໜ້າຂອງປະຊາຊົນ ໄປເຂບອ້າງ, ຍາດແຍ່ງເອົາການຊ່ວຍເຫລືອ ມາເຂົ້າຖົງຂອງຄນະພັກຣັດ. ຄວາມບໍ່ໂປ່ງໃສ ໃນວົງການສຶກສາ ມັນກໍບໍ່ແຕກຕ່າງຫຍັງກັບຂບວນການສໍ້ຣາດບັງຫລວງຂອງພັກຣັດ ໃນທຸກໆຣະດັບ ແລະ ການເປັນຄົນຖ່ອຍ, ສູບຝິ່ນກິນກັນຊາ, ເປັນນັກເລງການພນັນ ຂອງນັກຮຽນ, ນັກສຶກສາ, ຂອງຊາວໜຸ່ມ ເຍົາວະຊົນ ມັນກໍສອດຄ່ອງກັບຄວາມມຸ້ງມາດປາຖນາ ຂອງພັກຣັດຢູ່ແລ້ວ! ທີ່ຕ້ອງການ

ເບື່ອເມົາຄົນລາວ ໃຫ້ກາຍເປັນຄົນພິການໄປທັງປະເທດ ດ້ວຍການຂຍາຍກົນໄກອະບາຍະມຸກ, ຂຍາຍຫວຍເລກທ້າຍ, ຂຍາຍບາຣ໌ເຕັ້ນລໍາ, ຂຍາຍແຫລ່ງຈໍາໜ່າຍຢາເສບຕິດ, ຂຍາຍສະຖານທີ່ບັນເທີງ ແລະ ຂຍາຍກາສີໂນຊື້ນ ຢ່າງຫລວງຫລາຍ ໃນທົ່ວປະເທດຊຶ່ງບໍ່ເຄີຍມີມາກ່ອນ.

ສນັ້ນ, ການທີ່ທ່ານ ມັງໜໍ່ເມກ ບອກໃຫ້ເຈົ້າໜ້າທີ່ ຂແນງການສຶກສາ ຊ່ວຍກັນແກ້ໄຂ ໃຫ້ຣະບົບ ການສຶກສາຂອງລາວ ເຂົ້າຣະບຽບວິນັຍແລະມີຄຸນພາບດີນັ້ນ...ເຖິງແມ່ນທ່ານຈະບອກແລ້ວບອກອີກແລະບອກເລື້ອຍໆໄປ ຈົນກວ່າຟ້າດິນຈະສລາຍ ກໍບໍ່ມີວັນຈະເປັນໄປໄດ້, ເພາະເປັນຍ້ອນຢູ່ໃນ ຣະບອບຜເດັດການຂ້າທາດນີ້ເອງ!. ບັນດາຜູ້ນໍາ, ກໍລ້ວນແລ້ວແຕ່ເປັນ ນັກທິດສດີນໍ້າເຕົ້າເປົ່າ, ທິດສດີ ຈັກຈັ່ນ! "ເວົ້າແນວນຶ່ງ ຊໍ້າພັດເຮັດແນວນຶ່ງ"... – ບອກວ່າ ກຽດຊັງຣະບອບເກົ່າເນົ່າເໝັນ, ສັງຄົມເປື່ອຍເຫຍື່ອຍ ... ແຕ່ເມື່ອໄດ້ຂຶ້ນກໍາອໍານາດແລ້ວ, ຊໍ້າພັດກາຍມາເປັນຜູ້ນໍາ ສັງຄົມເນົ່າລະ!.

ພັກຣັດ ບໍ່ໄດ້ສ້າງເງື່ອນໄຂ ແລະສ້າງສະພາບແວດລ້ອມທີ່ດີ ເພື່ອເຮັດໃຫ້ຣະບົບການສຶກສາ ເຂົ້າຣະບຽບວິນັຍ ແລະມີຄຸນພາບດີ, ດ້ວຍເຫດໃດ ຣະບົບການສຶກສາຂອງລາວ ຈຶ່ງຈະດີໄດ້? –ພັກຣັດ ບໍ່ໄດ້ເອົາໃຈໃສ່ ປັດຈັຍ ທີ່ເປັນເງື່ອນໄຂພື້ນຖານ ໃຫ້ເດັກນ້ອຍ ໄດ້ຮັບການສຶກສາ, ພັກຣັດ ບໍ່ໄດ້ເອົາໃຈໃສ່ຊ່ວຍເຫລືອ ປະຊາຊົນທີ່ທຸກຍາກ ຊຶ່ງອາສັຍແຮງງານຂອງລູກ ເພື່ອຊອກຢູ່ຫາກິນ ແຕ່ລະວັນ ແທນທີ່ຈະສົ່ງເສີມ ໃຫ້ລູກ ໄດ້ເຂົ້າໂຮງຮຽນ. ນອກຈາກນີ້ແລ້ວ, ຍັງຕ້ອງຈ່າຍຄ່າໂຮງຮຽນ, ຊື້ ອຸປກອນການຮຽນຕື່ມອີກ. ບາງບ່ອນ ກໍບໍ່ມີໂຮງຮຽນ, ຫລືມີ...ບ່ອນຮຽນ ກໍບໍ່ສດວກ; ນັກຮຽນ ລົ້ນໂຮງຮຽນ, ຫ້ອງນຶ່ງໆ ມີບໍ່ຕໍ່າກວ່າ 50 ຫລື 70 ຄົນ, ບວກເຂົ້າກັບຄວາມ ບໍ່ຍຸຕິທັມໃນສັງຄົມ. ລູກຫລານ ຂອງຄນະພັກຣັດ ບໍ່ຮຽນ..ກໍເສງໄດ້!. ສ່ວນລູກຫລາຍ ຂອງປະຊາຊົນ, ແມ່ນຈະຮຽນເກັ່ງ ຮຽນດີ ມີຣະບຽບວິນັຍ ຫລາຍປານໃດກໍຕາມ... ກໍບໍ່ມີໂອກາດ ທີ່ຈະສອບເສງໄດ້ ຫລືເຂົ້າຮຽນຕໍ່ຕື່ມອີກ.

ພັກຣັດ ບໍ່ໄດ້ເອົາໃຈໃສ່ແກ້ໄຂ ຊ່ວຍເຫລືອ ໃຫ້ເດັກນ້ອຍ ໄດ້ມີ ສຸຂພາບແຂງແຮງດີ ທາງດ້ານຮ່າງກາຍ ແລະຈິດໃຈ ຕາມທີ່ປະເທດ ຈເຣີນສີວິໄລທັງຫລາຍ ປະຕິບັດກັນມາ ເປັນຕົ້ນ, ນັບຕັ້ງແຕ່ແມ່ຖືພາ, ພວກເຂົາ ກໍມີແພດໝໍປະຈໍາ ຊ່ວຍເຫລືອແນະນໍາ ໃຫ້ຜູ້ເປັນແມ່ໄດ້ຢູ່ດີກິນດີ ເພື່ອໃຫ້ລູກໃນທ້ອງ ມີສຸຂພາບແຂງແຮງດີ, ເມື່ອເຖິງວັຍຮຽນ, ພວກເຂົາ ກໍເຂົ້າໂຮງຮຽນ ທີ່ມີຄຣູ ອາຈານ ໄດ້ມາຕຖານ ໃນການສິດສອນ. ພວກເຂົາ, ມີໂຮງຮຽນ ແລະອຸປກອນພຽງພໍ, ທຸກໆຄົນ ໄດ້ຮັບ ການສຶກສາຮໍ່າຮຽນ ຢ່າງເທົ້າທຽມກັນ.

**ຄວາມຫລົ້ມເຫລວ ໃນຣະບົບການສຶກສາລາວນັ້ນ, ບໍ່ໄດ້ເກີດມາຈາກ ຄວາມຮູ້ເທົ້າ ບໍ່ເຖິງການຂອງ ນັກຮຽນ ຫລືມາຈາກຄວາມຜິດພາດ ຂອງຄຣູ ອາຈານ ຢ່າງໃດເລີຍ... ແຕ່ ມັນເປັນຍ້ອນ ການບໍຣິຫານ ປະເທດຊາດ ຂອງພັກຣັດຕ່າງຫາກ. ສນັ້ນ, ຢາກໃຫ້ການສຶກສາລາວ ເຂົ້າຣະບຽບວິນັຍແລະມີຄຸນພາບດີ... ພັກຣັດ ຕ້ອງປ່ຽນຣັຖບານໂດຍໄວ**

**ສນກາງຕາງໜ້າ**
**ພັກ ແລະກຳລັ້ງທັບເສລີປະຊາທິປະໄຕລາວ**
**ກອງວິຈັຍ**
**ວັນທີ ໑໔ ສິງຫາ ໒໐໐໗.**

**ຄວາມເຫັນໂຄສົກ:**

ມັນເປັນເລື້ອງຕລົກ ແລະໜ້າຢາກຫົວທີ່ສຸດ...ທີ່ຣັຖມົນຕຣີກະຊວງສຶກສາ ຕ້ອງຕິວ່າ "ນັກຮຽນປອມແປງໃບປະກາສນິຍະບັດ, ຄຣູ ອາຈານ ບໍ່ມີຄວາມໂປ່ງໃສ, ນັກຮຽນຕິດເກມ ຕິດການພນັນ".... ແຕ່ພັກຣັດ ຊ້ຳພັດບໍ່ແຍງເບິ່ງຕົນເອງ!, ເຊີ້ກະຕ່າ ຍໍໂຕ.

ພວກເຂົາ ປອມແປງໃບປະກາດ ມັນກໍບໍ່ແຕກຕ່າງກັບ ພັກຣັດ ຕົວະຕ່າງປະເທດ, ອ້າງເອົາຄວາມທຸກຍາກ ຂອງປະຊາຊົນ, ຂໍການຊ່ວຍເຫລືອ ເພື່ອມະນຸສທັມ. ບາດໄດ້ການຊ່ວຍເຫລືອມາ ໂດຍບໍ່ໄດ້ຈ່າຍຄືນ, ພັກຣັດຊ້ຳພັດອ້າງວ່າ ເປັນການ "ຊ່ວຍເຫລືອລ້າ" ເລີຍພາກັນ ເອົາເຂົ້າຖົງຕົນເອງໝົດ! ປະຊາຊົນ ຜູ້ທຸກຍາກ ກໍເລີຍບໍ່ໄດ້ຫຍັງ.

ພັກຣັດ, ອ້າງບໍ່ມີຄວາມໂປ່ງໃສ ໃນວົງການສຶກສາ, ຄຣູ ອາຈານ ເກັບເງິນນັກຮຽນ, ແຕ່ຊ້ຳພັດບໍ່ເວົ້າເຖິງ ພັກຣັດພາກັນສໍ້ຣາດບັງຫລວງ ໂກງພາສີຢ່າງຫລວງຫລາຍ, ຈົນຊາວຕ່າງປະເທດ ທີ່ເຄີຍໃຫ້ການ ຊ່ວຍເຫລືອ ນັ້ນ ໝົດກຳລັງໃຈ.

ພັກຣັດ ເປັນຜູ້ສ້າງກົນໄກອະບາຍະມຸກ, ເບື່ອເມົາຄົນໃນຊາດ ຂອງຕົນເອງ ໃຫ້ເປັນພິການທັງດ້ານຮ່າງກາຍ ແລະຈິດໃຈ ແລ້ວມາໂຍນຄວາມຜິດ ໃສ່ນັກຮຽນນັກສຶກສາ ຊາວໜຸ່ມເຍົາວະຊົນ ວ່າ ເປັນຄົນບໍ່ດີ, ຕິດຫລິ້ນຕິດກິນ ສູບຝິ່ນກິນກັນຊາຕ່າງໆເຫລົ່ານີ້, ມັນກໍແມ່ນຄວາມຜິດ ຂອງພັກຣັດເອງ. ທັງໝົດນີ້, ມັນໄດ້ສະທ້ອນເຖິງ ໃບໜ້າ ອັນສົກະປົກ ໃນການບໍຣິຫານປະເທດຊາດ ຂອງພັກຣັດ ແຕ່ຝ່າຍດຽວ. ມັນບໍ່ຕ່າງຫຍັງ ກັບ "**ກະປູສອນລູກ ຫລື ນົກເຄົ້າ ທ້ວງຕາແມ່**".